# Make Your Money Work For You (2009)

ຄວາມຮັ່ງມີມາຈາກການທ້ອນໂຮມເງິນ

ປື້ມເຫຼັ້ມນ້ອຍໆຫົວນີ້ຈະນຳເອົາລາຍລະອຽດຕ່າງໆກ່ຽວກັບການທ້ອນໂຮມເງິນ, ການຕັ້ງເປົ້າໝາຍໃນໄລຍະສັ້ນແລະຍາວເພື່ອຊຸກຍູ້ໃຫ້ມີການທ້ອນໂຮມເງິນ, ການເປີດບັນຊີທ້ອນເງິນ ແລະວິທີທີ່ຈະເຮັດໃຫ້ເງິນກ້ອນນຶ່ງອອກໝາກອອກຜົນ. ແລ້ວຍັງມີໃບຢັ້ງຢືນຝາກເງິນ ຊີດີ (CDs), ບັນຊີເງິນເບັ້ຽບຳນານ (IRAs), ພັນທະບັດ U.S. Savings Bonds ແລະ ບັນຊີທ້ອນເງິນເພື່ອເອົາໄວ້ຈ່າຍຄ່າໂຮງຮຽນຂອງລູກໆ ເມື່ອເວລາພວກເຂົາໃຫຍ່ເຕີບໂຕເຂົ້າໄປຮຽນໃນມະຫາວິທະຍາໄລ.

Table of Contents


- ການເລີ່ມຕົ້ນຂອງການທ້ອນເງິນ
- ທຳໃຈເຢັນໆໄວ້ກ່ອນ
- ອັດຕາດອກເບັ້ຽ
- ເງິນທ້ອນກ້ອນນ້ອຍກາຍເປັນເງິນທ້ອນກ້ອນໃຫຍ່
- ໄດ້ຕາມເປົ້າໝາຍ
- ຝາກເງິນໄວ້ດີກວ່າ
- ບັນຊີທ້ອນເງິນ
- ເປີດບັນຊີເງິນທະນາຄານໃໝ່
- ຜົນກຳໄຣທີ່ໄດ້ຈາກການທ້ອນໂຮມເງິນ
- ລົງທຶນກັບຣັຖບານສະຫະຣັຖອະເມຣິກາ
- ບໍ່ເສັຽພາສີຖ້າຝາກເງິນໃນບັນຊີເບັ້ຽບຳນານ
- ທ້ອນເງິນໄວ້ຢູ່ທີ່ທຳງານ
- ການສ່ຽງແລະການໄດ້ຜົນ


## ການເລີ່ມຕົ້ນຂອງການທ້ອນເງິນ

ຄວາມຮັ່ງມີປຽບເໝືອນດັ່ງການກໍ່ຝາດິນຈີ່ທີ່ທ່ານໄດ້ວາງມັນໃສ່ທີ່ລະກ້ອນໆ ແລະກວດເບິ່ງວ່າຝາກ້ອນດິນຈີ່ນັ້ນ ໜາແໜ້ນດີຫຼືບໍ່ ກ່ອນທີ່ທ່ານຈະວາງຊັ້ນກ້ອນດິນຈີ່ອີກ. ການທ້ອນໂຮມເງິນກໍ່ປຽບເໝືອນກັນດັ່ງນີ້ແລະ ທີ່ທ່ານຈະຕ້ອງຕັ້ງເປົ້າໝາຍທີ່ເປັນຈິງແລະເຮັດຕາມຂັ້ນຕອນກ່ອນທ່ານຈະໄປເຖິງຈຸດເປົ້າໝາຍ.

ທ່ານອາດຄິດວ່າ ການທ້ອນໂຮມເງິນນີ້ເປັນເຣື່ອງຍາກ ແຕ່ຖ້າທ່ານທ້ອນເງິນໄວ້ເທື່ອຣະເລັກເທື່ອຣະນ້ອຍ, ອີກບໍ່ດົນ ທ່ານກໍ່ຈະມີເງິນກ້ອນຈຳນວນນຶ່ງທີ່ສາມາດເອົາມາໃຊ້ໄດ້ໃນເວລາທີ່ຈຳເປັນ ເຊັ່ນ ການຈ່າຍຄ່າສ້ອມແປງຣົດ ຫຼື ການຊື້ເຄື່ອງຂອງເຮືອນອັນໃຫຍ່ຕ່າງໆ.

## ທຳໃຈເຢັນໆໄວ້ກ່ອນ

ຄວາມຮັ່ງມີບໍ່ແມ່ນຊິມີໝາກມີຜົນໂລດ. ທາງທີ່ດີແລ້ວ ທ່ານຄວນຝາກເງິນເຂົ້າບັນຊີທ້ອນເງິນໄວ້ໃຊ້ໃນເວລາຈຳເປັນ. ບັນຊີທ້ອນເງິນແມ່ນເປັນເງິນກ້ອນນຶ່ງທີ່ທ່ານຝາກໄວ້ໃນເວລາທີ່ທ່ານຕົກງານຫຼືໄດ້ຖືກບາດເຈັບຕ່າງໆທີ່ທ່ານບໍ່ສາມາດໄປເຮັດວຽກໄດ້.

ເງິນດັ່ງກ່າວນີ້ ທ່ານຕ້ອງມີໄວ້ກ້ອນນຶ່ງທີ່ເທົ່າກັນກັບລາຍໄດ້ເງິນເດືອນໃນໄລຍະສາມຫາຫົກເດືອນແລະເປັນເງິນທີ່ເທົ່າກັນກັບລາຍໄດ້ຂອງຫົວໜ້າຄອບຄົວທີ່ສູງກວ່າໝູ່. ເງິນທ້ອນໄວ້ໃຊ້ໃນເວລາຈຳເປັນນີ້ ສາມາດໃຊ້ໃນເວລາທີ່ທ່ານຕ້ອງຊື້ເຄື່ອງເຮືອນແພງຕ່າງໆ ເຊັ່ນການແປງຣົດຫຼືປ່ຽນເຕົາໄຟຟ້າໃໝ່.

## ອັດຕາດອກເບ້ຍ

ດອກເບ້ຍແມ່ນການໃຊ້ຈ່າຍເງິນ. ທະນາຄານຂອງທ່ານຈ່າຍດອກເບ້ຍໃຫ້ແກ່ທ່ານເມື່ອທ່ານຝາກເງິນໄວ້ໃນບັນຊີທ້ອນໂຮມເງິນ. ຖ້າທ່ານຢືມເງິນກູ້ຢືມ ທ່ານຕ້ອງຈ່າຍດອກເບ້ຍໃຫ້ທະນາຄານທີ່ທ່ານໄດ້ຂໍຢືມມາ. ທະນາຄານທີ່ມີບັນຊີທ້ອນເງິນນັ້ນ ຈະມີໂຕໜັງສືວ່າ APY (annual percentage yield) ລົງໃນທ້າຍຫຼັງອັດຕາດອກເບ້ຍ. ນີ້ກໍ່ແມ່ນລາຍໄດ້ທີ່ທ່ານອາດຈະໄດ້ຖ້າວ່າທ່ານຝາກເງິນໄວ້ໃນເວລານຶ່ງປີ. ດອກເບ້ຍນັ້ນ ມີສອງຊະນິດ: ດອກເບ້ຍທຳມະດາ ແລະດອກເບ້ຍກິນກຳໄຣຫຼາຍ. ດອກເບ້ຍທຳມະດາແມ່ນໄດ້ຂີ້ດອກຈາກເງິນທີ່ທ່ານເອົາເຂົ້າຝາກໄວ້ເທົ່ານັ້ນ. ສຳລັບດອກເບ້ຍກິນກຳໄຣຫຼາຍນັ້ນ ທ່ານຈະໄດ້ຂີ້ດອກຈາກເງິນທີ່ທ່ານເອົາເຂົ້າຝາກໄວ້ພ້ອມດ້ວຍຂີ້ດອກທີ່ທ່ານໄດ້ກຳໄຣມາ.

## ເງິນທ້ອນກ້ອນນ້ອຍກາຍເປັນເງິນທ້ອນກ້ອນໃຫຍ່

ຖ້າທ່ານຮູ້ວ່າ ທ່ານໃຊ້ຈ່າຍຫຍັງແດ່ຂອງແຕ່ຣະມື້ ທ່ານຈະສາມາດລົດຜ່ອນການໃຊ້ຈ່າຍຢ່າງຟຸ້ມເຟືອແລະທ່ານກໍ່ຈະມີງົບປະມານ. ງົບປະມານແມ່ນແຜນການໃຊ້ຈ່າຍທີ່ສາມາດບອກວິທີການລົດຜ່ອນການໃຊ້ຈ່າຍໄດ້. ເມື່ອທ່ານຮູ້ດີແລ້ວວ່າເງິນເຂົ້າເງິນອອກໄປໃສແດ່ທ່ານກໍ່ຈະສາມາດຕັ້ງງົບປະມານໃຫ້ຕົວເອງໄດ້.

ຫຼາຍຜູ້ຄົນເຫັນວ່າ ເງິນເລັກໆນ້ອຍໆນີ້ ສາມາດທ້ອນໂຮມເຂົ້າກັນເປັນເງິນກ້ອນໃຫຍ່ໄດ້. ກ່ອນທ່ານຈະຕັ້ງງົບປະມານ, ທ່ານຄວນຮູ້ຈັກວ່າ ທ່ານໃຊ້ຈ່າຍຫຼາຍປານໃດແຕ່ລະເດືອນແລ້ວທ່ານເອົາມາປຽບທຽບໃສ່ກັນກັບລາຍໄດ້ເງິນເດືອນ. ເມື່ອທ່ານຮູ້ດີແລ້ວວ່າງົບປະມານຂອງທ່ານນັ້ນ ມີເທົ່າໃດແທ້ ທ່ານກໍ່ຈະໃຊ້ຈ່າຍຕາມງົບປະມານນັ້ນເປັນອາທິດໆໄປທ່ານກໍ່ຈະຮູ້ເອງວ່າ ທ່ານຄວນຍອມກິນຍອມໃຊ້ຫຍັງແດ່. ຖ້າທ່ານໃຊ້ຈ່າຍນ້ອຍກວ່າລາຍໄດ້ທ່ານກໍ່ຈະມີເງິນເຫຼືອພໍທີ່ເອົາທ້ອນໂຮມໄວ້.

## ໄດ້ຕາມເປົ້າໝາຍ

ເປົ້າໝາຍຂອງການທ້ອນໂຮມເງິນກໍ່ເປັນຂັ້ນນຶ່ງທີ່ທ່ານຕັ້ງໄວ້ໃນຊີວິດ. ເປົ້າໝາຍດັ່ງກ່າວກໍ່ເປັນແຜນການໃນໄລຍະສັ້ນແລະໄລຍະຍາວ. ເປົ້າໝາຍໃນໄລຍະສັ້ນແມ່ນທ່ານຕ້ອງການເຫັນໝາກເຫັນຜົນພາຍໃນນຶ່ງຫຼືສອງປີ ເຊັ່ນ ການຮຽນຫຼືຊື້ຣົດ. ເປົ້າໝາຍໃນໄລຍະຍາວອາດໃຊ້ເວລາດົນ

ປະມານຫ້າຫຼືຫຼາຍປີກວ່ານັ້ນກ່ອນທີ່ທ່ານຈະສາມາດຊື້ເຮືອນຫຼັງນຶ່ງໄດ້ ແລະຕ້ອງໃຊ້ເວລາ ຫຼາຍປີຂຶ້ນໄປອີກ ຖ້າທ່ານຫວັງວ່າຈະທ້ອນໂຮມເງິນເຂົ້າໄວ້ກິນເບັ້ຽບຳນານຫຼືສົ່ງເສັຽຄ່າໃຊ້ຈ່າຍໂຮງຮຽນລູກໆ.

## ຝາກເງິນໄວ້ດີກ່ວາ

ທາງທີດີແລ້ວ ທ່ານຄວນຝາກເງິນໄວ້ໃນບັນຊີເງິນທີ່ຖອນອອກໄດ້ງ່າຍໃນເວລາທີ່ຈຳເປັນທີ່ທ່ານຈະຕ້ອງຖອນອອກເອົາມາໃຊ້. (ຖ້າທ່ານໄດ້ເງິນຈາກຣັຖບານ ງົບປະມານເງິນທີ່ທ່ານສາມາດຝາກໄວ້ໄດ້ນັ້ນ ອາດຝາກໄວ້ບໍ່ໄດ້ຫຼາຍເກີນການຈຳກັດ. ກ່ອນທີ່ທ່ານຈະເລີ່ມຝາກເງິນເຂົ້າບັນຊີເງິນທະນາຄານ ທ່ານຄວນໄປທາບທາມເບິ່ງກ່ອນວ່າ ຖອນອອກໄດ້ຫຼືບໍ່ໄດ້.)

ເງິນທີ່ສຳລັບຖອນເອົາອອກມາໃຊ້ໄດ້ຢ່າງສະດວກນັ້ນ ເອີ້ນວ່າ "liquid." ທ່ານສາມາດຝາກເງິນໄວ້ໃນບັນຊີທະນາຄານຕ່າງໆ.

ຖ້າຝາກໄວ້ໃນບັນຊີເງິນຂອງຣັຖບານ ທ່ານກໍ່ຈະໄດ້ຂີ້ດອກໜ້ອຍ ແຕ່ມັນປອດໄພດີກວ່າທະນາຄານເອກະຊົນ. ໃບຢັ້ງຢືນຝາກເງິນໃນໄລຍະສັ້ນ (CD) ບາງທີ່ອາດໃຫ້ກຳໄຣຫຼາຍກວ່າທະນາຄານຂອງທ່ານ. ທ່ານສາມາດຝາກເງິນໃນໄລຍະສັ້ນພຽງແຕ່ເດືອນດຽວຖ້າຝາກໃນ CD. ເຄືອຄາຍ ອິນເຕີແນດ Bankrate.com ຈະບອກໃຫ້ຮູ້ວ່າ ອັດຕາຂອງທະນາຄານຕ່າງໆ ແຕກຕ່າງຈາກກັນປານໃດ.

## ບັນຊີທ້ອນເງິນ

ບັນຊີທ້ອນເງິນມີໄວ້ເພື່ອທ່ານຈະໄດ້ຝາກເງິນຂອງທ່ານໄວ້ໃຫ້ດີແລະໄດ້ກິນດອກເບັ້ຽນຳອີກ. ບັນຊີເງິນທະນາຄານຕ່າງໆ ຈະມີຄ້ຳປະການໄພຈາກຣັຖບານ ເຖິງ $250,000. ທາງທະນາຄານໃຫ້ດອກເບັ້ຽສຳລັບເງິນທີ່ຝາກໄວ້ໃນບັນຊີ ແລ້ວ ທ່ານກໍ່ສາມາດຝາກເງິນໄດ້ຕາມສະບາຍຫຼືຖອນເງິນອອກໃນເມື່ອທ່ານຕ້ອງການເອົາອອກມາໃຊ້.

ສຳລັບທະນາຄານທີ່ບໍ່ເອົາຜົນກຳໄຣແມ່ນ credit union ເຊິ່ງທ່ານສາມາດມີບັນຊີເຂົ້າຮູ້ນສ່ວນກັນໄດ້ແລະມີບໍຣິການອື່ນໆໃຫ້ພ້ອມ. ອົງການດັ່ງນີ້ ມີບັນຊີທ້ອນເງິນທີ່ບໍ່ເອົາຜົນກຳໄຣແລະກໍ່ມີບໍຣິການຕ່າງໃຫ້ແກ່ລູກຄ້າມາໃຊ້ ເຊິ່ງລູກຄ້ານັ້ນ ມີຫຼາຍສິ່ງຫຼາຍຢ່າງຕົງກັນ ເຊັ່ນ ມັກສິ່ງໃດສິ່ງນຶ່ງຄືກັນ, ເຮັດວຽກໃຫ້ບໍຣິສັດດຽວກັນ ຫຼື ຢູ່ກິນທີ່ໃກ້ໆບ່ອນດຽວກັນ ຫຼື ໄປເຂົ້າໂບດດຽວກັນ. ເງິນທີ່ທ່ານເອົາມາຝາກໄວ້ໃນບັນຊີເງິນຂອງທະນາຄານດັ່ງກ່າວນີ້ ຈະມີປະກັນສູງເຖິງ $250,000 ເຊິ່ງອົງກັນ National Credit Union Administration (NCUA) ເປັນອົງການທີ່ໃຫ້ຄ້ຳປະກັນ.

ບັນຊີເງິນພັດທະນາຂອງແຕ່ລະລູກຄ້າ (IDAs) ເປັນບັນຊີພິເສດທີ່ຊ່ອຍຄອບຄົວທີ່ມີລາຍໄດ້ຕ່ຳທີ່ພວກເຂົາຢາກກັບຄືນເຂົ້າຮຽນຕື່ມຢູ່ມະຫາວິທະຍາໄລເອົາປະຣິນຍາໂທຫຼືປະຣິນຍາເອກ ຫຼືບໍ່ຊັ້ນກໍ່ກຳລັງໄປຝຶກງານຢູ່, ຢາກຊື້ເຮືອນຫຼືຕັ້ງທຸຣະກິດຂອງຕົນເອງ. ທາງທະນາຄານເອກະຊົນແລະສາທາຣະນະຈະຊ່ອຍທາງດ້ານເງິນ. ສ່ວນຫຼາຍ ຜູ້ທີ່ເປັນສະມາຊິກ IDA ນີ້

ຈະໄປຮຽນກ່ຽວກັບວິທີທີ່ປັບປຸງເລື່ອງການເຄດິດຂອງເຂົາ, ຕັ້ງງົບປະມານ ແລະ ເລີ່ມແຜນການທ້ອນເງິນ. ລາຍລະອຽດແລະໂຄງການຕ່າງໆຈະມີຢູ່ທາງອອນໄລນ໌ທີ່ www.idanetwork.org. ກົດ "IDA Directory" ແລະຕີເຂົ້າຣະຫັດ ZIP code ເພື່ອສຶກສາຕື່ມ.

## ເປີດບັນຊີເງິນທະນາຄານໃໝ່

ເວລາທ່ານໄປເປີດບັນຊີທະນາຄານໃໝ່ ທ່ານຕ້ອງມີບັດປະຈໍາໂຕໄປນໍາ, ບັດນຶ່ງຕ້ອງມີຮູບ. ຕາມທໍາມະດາແລ້ວ ທ່ານຕ້ອງມີໃບ Social Security ກ່ອນທີ່ທະນາຄານຈະເປີດບັນຊີໃຫ້. ສ່ວນເງິນຝາກລ່ວງໜ້ານັ້ນ ແມ່ນແລ້ວແຕ່ທາງທະນາຄານຈະໃຫ້ເອົາຝາກ. ບາງທະນາຄານຈະໃຫ້ຝາກພຽງແຕ່ $1 ດຽວເທົ່ານັ້ນ ບາງພອງກໍ່ໃຫ້ຝາກ $50, $100 ຫຼື $500. ທ່ານສາມາດໃຊ້ເງິນສົດຫຼືເຊັກໃນການເປີດບັນຊີໃໝ່. ເວລາທ່ານຂໍເປີດບັນຊີໃໝ່ ທາງທະນາຄານຈະຂໍເບິ່ງປະວັດການຄັງຂອງທ່ານໂດຍໄປຂໍເອົາລາຍງານຈາກບໍຣິສັດ CheckSystems. ຖ້າຫາກວ່າທ່ານເຄີຍມີບັນຫາໃດໆ ກັບບັນຊີຂອງທ່ານ ເຊັ່ນ ທ່ານປິດບັນຊີໂດຍທີ່ທ່ານຍັງບໍ່ໄດ້ຈ່າຍໜີ້ສິນໃຫ້ໝົດກ່ອນ, ທາງທະນາຄານກໍ່ ອາດຈະບໍ່ເປີດບັນຊີໃໝ່ໃຫ້ແກ່ທ່ານ. ຖ້າທ່ານຢາກຮູ້ວ່າ ເປັນຫຍັງທ່ານບໍ່ໄດ້ບັນຊີໃໝ່ ທ່ານສາມາດເຂົ້າໄປແວບໄຊຕ໌ www.chexhelp.com ເພື່ອຂໍເອົາລາຍລະອຽດກ່ຽວກັບ ປະວັດການຄັງຕ່າງໆຂອງທ່ານ ຫຼື ໂທໄປກໍ່ໄດ້. ຖ້າຫາກວ່າ ບໍຣິສັດດັ່ງກ່າວຕີເຂົ້າສິ່ງໃດສິ່ງນຶ່ງ ທີ່ຜິດ ກ່ຽວກັບປະວັດຂອງທ່ານໆມີສິດທີ່ຈະແກ້ບັນຫານີ້ໄດ້.

## ຜົນກໍາໄຣທີ່ໄດ້ຈາກການທ້ອນໂຮມເງິນ

ຖ້າວ່າທ່ານທ້ອນໂຮມເງິນທຸກໆມື້ໄດ້, ຈະມີມື້ນຶ່ງທີ່ທ່ານຈະມີຊັບສິນເງິນທອງທີ່ເຮັດໃຫ້ທ່ານ ຮັ່ງມີແລະເງິນກ້ອນນັ້ນກໍ່ຈະເພີ້ມລາຄາຂຶ້ນເລື້ອຍໆ. ຊັບສິນນີ້ ແມ່ນມີເງິນທ້ອນໂຮມ, ເງິນເບັ້ຽບໍານານ, ຮຸ້ນສ່ວນ ແລະ ພັນທະບັດ ແລະ ເຮືອນຂອງທ່ານ ຫຼື ເຮືອນແລະດິນ ທີ່ໃຫ້ຄົນເຊົ່າ. ຢູ່ສະຫະຣັຖ ເຮືອນແມ່ນຊັບສິນກ້ອນໃຫຍ່.

ນັກຊ່ຽວຊານທາງດ້ານການຄັງແນະນໍາມາວ່າ ທ່ານຄວນທ້ອນໂຮມເງິນໄວ້ປະມານ 10% ຂອງລາຍໄດ້ແຕ່ລະປີ. ຖ້າເປັນເລື່ອງທີ່ຍາກເກີນໄປ, ເລີ່ມຕົ້ນທ້ອນໂຮມໄວ້ເທື່ອຣະນ້ອຍກ່ອນ. ເພື່ອບັງຄັບໃຫ້ທ່ານທ້ອນໂຮມເງິນໄວ້ ເອົາເງິນເຂົ້າບັນຊີທ້ອນໂຮມເງິນຫຼືບັນຊີເບັ້ຽບໍານານ(IRA) ເມື່ອທ່ານໄດ້ເບີກເງິນເດືອນ.

ໃບຢັ້ງຢືນຝາກເງິນຊີດີ (CD) ຫຼືທີ່ເອີ້ນກັນວ່າ ບັນຊີຝາກເງິນປະຈໍາ ເປັນບັນຊີທີ່ປອດໄພ ທີ່ເງິນຂອງທ່ານຈະເພີ້ມຂຶ້ນ. ຕາມທໍາມະດາແລ້ວ ທະນາຄານເປັນແຫ່ງທີ່ເບີກບັນຊີນີ້ໃຫ້ລູກຄ້າ ແຕ່ທ່ານສາມາດຊື້ກັບນາຍໜ້າຂອງບໍຣິສັດຮຸ້ນໄດ້. FDIC ຈະປະກັນໄພໃບຢັ້ງຢືນຊີດີ CD ແລະທະນາຄານຕ່າງໆ ປະກັນເຖິງ $250,000 ຕໍ່ລູກຄ້າ.

ອັດຕາດອກເບັ້ຽຂອງ CD ມີຫຼາຍອັດຕາ ແລະສ່ວນຫຼາຍຈະໃຫ້ອັດຕາສູງກວ່າບັນຊີທ້ອນເງິນ. ເມື່ອທ່ານຝາກເງິນໄວ້ໃນ CD ໃນໄລຍະຍາວ ທ່ານກໍ່ຈະໄດ້ດອກເບັ້ຽດີ. ຕາມທໍາມະດາແລ້ວ ຖ້າທ່ານຝາກໄວ້ໃນເວລາຍາວ ທ່ານຈະໄດ້ອັດຕາດອກເບັ້ຽສູງ. ເວລານັ້ນ ຈະເປັນນຶ່ງເດືອນ ຫາ

ຫ້າປີກໍ່ເປັນໄດ້. ຖ້າທ່ານຖອນເງິນຈາກ CD ກ່ອນມັນເຖິງກຳນົດເວລາ ທ່ານຈະຕ້ອງຈ່າຍຄ່າປັບໃໝ.

## ການລົງທຶນກັບຣັຖບານສະຫະຣັຖອະເມຣິກາ

ການຊື້ໃບພັນທະບັດລັງເງິນຕ່າງໆ ເປັນການລົງທຶນທີ່ປອດໄພທີ່ສຸດ ເພາະຣັຖບານມີຄ້ຳປະກັນ. ທ່ານສາມາດຊື້ໃບພັນທະບັດເຫຼົ່ານີ້ ເທົ່າໃດກໍ່ໄດ້ ໃນລາຄາ $50 ຫາ $10,000. ທ່ານຊື້ໃນລາຄາຕ່ຳກວ່າມັນຈະເຕັມກຳນົດ. ອັດຕາດອກເບັ້ຍມີຫຼາຍອັດຕາ ແຕ່ທ່ານໄດ້ຜົນກຳໄຣໜ້ອຍ. ໃບພັນທະບັດນີ້ ຈະຈ່າຍຄືນໃຫ້ໄດ້ແກ່ຜູ້ມີຊື່ໃນໃບພັນທະບັດເທົ່ານັ້ນ.

ທ່ານສາມາດຊື້ໃບພັນທະບັດ Series EE ທີ່ມີຄ້ຳປະກັນລາຄາດັ່ງເດີມຂອງເງິນຊື້ພາຍໃນ 20 ປີ ຫຼືຊື້ໃບພັນທະບັດ Series I ທີ່ໄລ່ຜົນກຳໄຣດ້ວຍຕາມເງິນເຟີ້. ຕົວຢ່າງ ຖ້າໃບພັນທະບັດ EE ອັນມີລາຄາ $100 ຈະຂາຍເປັນລາຄາ $50. ໃບພັນທະບັດ Series I ຈະຂາຍຕາຍໂຕໂລດ ເຊັ່ນ ຖ້າລາຄາເປັນ $100 ຄ່າຈ່າຍກໍ່ຈະເປັນ $100 ແລະໄດ້ກິນຂີ້ດອກທີ່ອັດຕາດອກເບັ້ຍທີ່ບໍ່ຄົງທີ່ສອງເທື່ອຕໍ່ປີເມື່ອໄລ່ຄິດໃສ່ເງິນເຟີ້. ຖ້າທ່ານຢາກສຶກສາເພີ້ມເຕີມເບິ່ງອີກ ທ່ານໄປແວບໄຊຕ໌ Saving Bonds (www.savingsbonds.gov).

## ບໍ່ເສັຽພາສີຖ້າມີບັນຊີເບັ້ຽບຳນານ

ບັນຊີເບັ້ຽບຳນານຂອງແຕ່ລະຜູ້ຄົນທີ່ເອີ້ນວ່າ (IRA) ເປັນບັນຊີທ້ອນເງິນທີ່ມີຂຶ້ນໃນບໍຣິສັດຕ່າງໆ ເພື່ອໃຫ້ບັນດາຜູ້ຄົນທີ່ຢາກທ້ອນເງິນກ້ອນນຶ່ງໄວ້ສຳລັບເອົາໄວ້ໃຊ້ຈ່າຍໃນເວລາພວກເຂົາອອກມາກິນເບັ້ຽບຳນານ. ຖ້າທ່ານຢາກຮູ້ວ່າ ເງິນເອົາເຂົ້າບັນຊີເບັ້ຽບຳນານໃນແຕ່ລະປີນັ້ນເອົາເຂົ້າໄດ້ເທົ່າໃດ ທ່ານໄປສຶກສາເພີ້ມເຕີມໄດ້ໃນແວບໄຊຕ໌ Internal Revenue Service ທີ່ www.irs.gov ຕີເຂົ້າຄຳສັບ “Publication 590” ໃນບ່ອນ Search. ຣັຖບານມີກົດລະບຽບອອກຄຳສັ່ງມາວ່າ ທະນາຄານຕ່າງໆຈະເປັນຜູ້ບໍຣິຫານບັນຊີພວກນີ້.

ບັນຊີ IRA ມີສອງຊະນິດ, traditional ແລະ Roth IRA. ສຳລັບບັນຊີ Traditional IRA ທ່ານບໍ່ຕ້ອງເສັຽພາສີໃດໆເລີຍ ເພາະ ເງິນທີ່ທ່ານເອົາເຂົ້າຝາກນັ້ນເປັນເງິນທີ່ບໍ່ໄດ້ເສັຽພາສີ ແລະທ່ານສາມາດຫັກເງິນທີ່ທ່ານເອົາເຂົ້າບັນຊີນີ້ ອອກຈາກພາສີໃນປີດຽວກັນ. ເງິນທີ່ທ່ານເອົາເຂົ້າບັນຊີເບັ້ຽບຳນານແລະດອກເບັ້ຽທີ່ໄດ້ມາ ທ່ານຈະເສັຽພາສາກ່ອນຕອນທີ່ທ່ານຖອນມັນອອກມາສ່ວນຫຼາຍໃນເມື່ອທ່ານມີອາຍຸ 59 ປີເຄິ່ງ. ຖ້າທ່ານຖອນເງິນຈາກບັນຊີ IRA ກ່ອນນັ້ນ, ທ່ານຕ້ອງຈ່າຍຄ່າປັບໃໝ 10% ແລະເສັຽພາສີອີກດ້ວຍ.

## ບັນຊີ Roth IRA ແມ່ນເປັນບັນຊີທີ່ຫຼີກລ້ຽງພາສີຣັຖບານບໍ່ໄດ້ ແຕ່ຜົນກຳໄຣນັ້ນຫຼີກພາສີໄດ້.

ທ່ານສາມາດເອົາເງິນເຂົ້າບັນຊີທັງສອງນີ້ໄດ້ ແຕ່ ເງິນທີ່ເອົາເຂົ້ານັ້ນ ຈະມີຂໍ້ຈຳກັດຄືກັນ. ໄປເບິ່ງເຣື່ອງລາຍລະອຽດໃນ www.irs.gov ວ່າ ທ່ານສາມາດເອົາເງິນຝາກເຂົ້າໄດ້ເທົ່າໃດ.

ຖ້າທ່ານມີອາຍຸກາຍ 59 ປີເຄິ່ງຫຼືເປັນພິການ, ເມື່ອທ່ານຖອນເງິນອອກຈາກບັນຊີ Roth IRA ທ່ານຈະບໍ່ເສັຽພາສີ ຖ້າວ່າ ບັນຊີນັ້ນໄດ້ມີອາຍຸຢ່າງໜ້ອຍ 5 ປີ. ທ່ານສາມາດຖອນເງິນອອກໄດ້ຕອນອາຍຸຍັງອ່ອນຢູ່ຖ້າທ່ານຖອນເງິນອອກໄປຊື້ເຮືອນເປັນເທື່ອທຳອິດ ຫຼື ຈ່າຍຄ່າໂຮງໝໍຕ່າງໆ. ສຳລັບເຫດຜົນອື່ນທີ່ທ່ານຕ້ອງການສຶກສາຮຽນຮູ້ເພີ້ມເຕີມອີກ ທ່ານໄປເບິ່ງໄດ້ໃນ (www.irs.gov).

## ທ້ອນເງິນໄວ້ຢູ່ທີ່ທຳງານ

ຢ່າເສັຽໂອກາດເລີຍ ເພາະທ່ານສາມາດທ້ອນເງິນໄວ້ໄດ້ຈາກບ່ອນທີ່ທຳງານ. ບັນດາພະນັກງານພະຍາຍາມຫຼີກລ້ຽງບໍ່ແບ່ງລາຍໄດ້ເງິນເດືອນເຂົ້າບັນຊີເບັ້ຽບຳນານ ຍ້ອນວ່າ ເມື່ອແບ່ງເງິນເດືອນອອກໄປແລ້ວ ລາຍໄດ້ຈະມີໜ້ອຍ. ແຕ່ທ່ານຕ້ອງຖືໂອກາດດີໆດັ່ງກ່າວ ເພາະ ຖ້າທ່ານແບ່ງເງິນຈຳນວນກ້ອນນຶ່ງອອກໄປຝາກໃນບັນຊີເບັ້ຽບຳນານ ທາງບໍຣິສັດຂອງທ່ານ ກໍ່ຈະເອົາເງິນຈຳນວນນຶ່ງຄືກັນເຂົ້າບັນຊີເບັ້ຽບຳນານຂອງທ່ານ ແລະເງິນທີ່ທ່ານແບ່ງອອກໄປເຂົ້າບັນຊີເບັ້ຽບຳນານນັ້ນຈະບໍ່ເສັຽພາສີ. ເວລາທ່ານຕ້ອງເຮັດອິນຄຳແທກ ທ່ານກໍ່ເສັຽພາສາໃຫ້ຣັຖບານໜ້ອຍ.

## ການສ່ຽງແລະການໄດ້ຜົນກຳໄຮ

ທຸກຄົນບໍ່ວ່າໃຜກໍ່ຕາມ ເມື່ອເອົາເງິນໄປລົງທຶນແລ້ວ ຜົນກຳໄຮທີ່ຢາກໄດ້ມານັ້ນ ຫຼາຍ. ທ່ານຢາກໄດ້ອັດຕາດອກເບັ້ຽສູງ ແລະການເອົາເງິນໄປສ່ຽງລົງທຶນກໍ່ມີຫຼາຍຊະນິດພ້ອມໆກັນ.

ບັນຊີທ້ອນເງິນ ແລະ ບັນຊີຊີດີ CD ມີຮັບປະກັນຈາກ FDIC ແຕ່ຜົນກຳໄຮນັ້ນ ໄດ້ໜ້ອຍກວ່າການເອົາໄປລົງທຶນກັບທຸຣະກິດອື່ນໆ ເພາະບັນຊີດັ່ງກ່າວ ປອດໄພກວ່າໝູ່. ປຽບທຽບໃສ່ກັບຕະຫຼາດຮຸ້ນສ່ວນຕ່າງໆທີ່ບໍ່ມີຮັບປະກັນຈາກ FDIC ແລ້ວ, ບັນຊີຈຳພວກນີ້ໄດ້ຜົນກຳໄຮຫຼາຍ.

ກ່ອນທີ່ທ່ານຈະຄິດເອົາເງິນໄປລົງທຶນ, ທ່ານຄວນສຶກສາເບິ່ງຜົນກຳໄຮ, ການສ່ຽງເສັຽເງິນ ແລະການຖອນເອົາເງິນອອກຈາກບັນຊີໄດ້ຢ່າງງ່າຍໆຫຼືບໍ່. ແລະເປັນໄປບໍ່ໄດ້ດອກທີ່ຈະມີການລົງທຶນຮຸ້ນສ່ວນທີ່ຈະໃຫ້ຜົນກຳໄຮຫຼາຍ, ການສ່ຽງເສັຽເງິນໜ້ອຍ ແລະ ການຖອນເງິນອອກງ່າຍດາຍ.

ມັນເປັນການສ່ຽງສຳລັບບາງຜູ້ຄົນທີ່ຈະເອົາເງິນໄປຊື້ຮຸ້ນ. ຢ່າໄປຟັງຄົນອື່ນເປັນເດັດຂາດໃນການຊື້ຮຸ້ນ ຖ້າວ່າທ່ານຍັງບໍ່ໄດ້ໄປສຶກສາຮຽນຮູ້ດ້ວຍຕົນເອງ. ແລ້ວອີກຢ່າງນຶ່ງ ມັນບໍ່ມີຮັບປະກັນໄດ້ວ່າລາຄາຂອງຮຸ້ນນັ້ນ ຈະຂຶ້ນຫຼືລົງໃນໄລຍະໃດ ແລະ ທ່ານຈະໄດ້ຜົນກຳໄຮຫຼືບໍ່.

ຫຼາຍໆຜູ້ຄົນມັກເອົາເງິນໄປຊື້ຮຸ້ນສ່ວນກັບບໍຣິສັດຮຸ້ນສ່ວນເພື່ອຜ່ອນການສ່ຽງເສັຽເງິນໜ້ອຍລົງ. ບໍຣິສັດຮຸ້ນສ່ວນມີບັນຊີຮຸ້ນຫຼາຍໆບັນຊີທີ່ບັນດາຜູ້ຊື້ຮຸ້ນສາມາດຊື້ໄດ້ນຳກັນ. ແລ້ວເມື່ອບໍຣິສັດຮຸ້ນສ່ວນຂາຍຮຸ້ນໄດ້ ຫຼື ບໍຣິສັດເສັຽເງິນ ຫຼື ເສັຽຄ່າບໍຣິການອື່ນໆ ຜູ້ທີ່ຊື້ຮຸ້ນນຳບໍຣິສັດນັ້ນກໍ່ເສັຽຕາມໄປດ້ວຍກັນ.